Lao Version

# ຂັ້ນຕອນດຳເນີນງານມາດຕະຖານ (SOP)

ການປະເມີນຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການ
ໃນແຂວງຄຳມ່ວນ, ສປປລາວ

ພັດທະນາພາຍໃຕ້ໂຄງການພັດທະນາແຂວງຄຳມ່ວນ,
ຈັດຕັ້ງປະຕິບັດໂດຍພະແນກແຜນການແລະການລົງທຶນ, ທ່າແຂກ, ແຂວງຄຳມ່ວນ

adpc

# ສາລະບານ


I. ວັດຖຸປະສົງ 2
II. ນິຍາມ 2
III. ກຳນົດເວລາ 3
IV. ຂອບເຂດ 3
V. ການໃຫ້ເງິນທຶນ 3
VI. ບັນດາກິດຈະກຳກ່ອນການດຳເນີນ DaLNA 3
VII. SOP ສຳລັບການດຳເນີນການ DaLNA ໃນແຂວງຄຳມ່ວນ 4
VIII. ບົດແນະນຳໂດຍທົ່ວໄປກ່ຽວກັບ SOP 8


# ອັກສອນຫຍໍ້

| | |
|---|---|
| DaLNA | ການປະເມີນຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການ |
| PDMC | ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດຂັ້ນແຂວງ |
| PDNA | ການປະເມີນຄວາມຕ້ອງການຫຼັງໄພພິບັດ |
| SOP | ຂັ້ນຕອນດຳເນີນງານຕາມມາດຕະຖານ |
| ToR | ໜ້າທີ່ຄວາມຮັບຜິດຊອບ |

# I. ວັດຖຸປະສົງ

ໄພພິບັດໂດຍສະເພາະໄພນໍ້າຖ້ວມ, ໄດ້ກໍ່ໃຫ້ເກີດຜົນກະທົບຮຸນແຮງ ຕໍ່ກັບປະຊາຊົນ ແລະ ເສດຖະກິດ ຂອງໝົດທຸກເມືອງໃນແຂວງຄຳມ່ວນ. ເມື່ອໄພພິບັດຂະໜາດໃຫຍ່ເກີດຂຶ້ນ, ມີຄວາມຈຳເປັນຕ້ອງຄາດຄະເນ ຄວາມເສຍຫາຍ ແລະ ການສູນເສຍ ເພື່ອເຮັດໃຫ້ຂັ້ນແຂວງ ສາມາດສ້າງເປັນຍຸດທະສາດ, ແຜນງານ ແລະ ໂຄງການຕ່າງໆທີ່ຕ້ອງການ ສຳລັບການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ ເພື່ອການຫຼຸດຜ່ອນຜົນກະທົບຂອງໄພພິບັດໃນອານາຄົດ, ໂດຍສະເພາະ ໄພນໍ້າຖ້ວມ. ຂັ້ນຕອນດຳເນີນງານມາດຕະຖານ (SOP) ນີ້ ມີຈຸດປະສົງເພື່ອແນະນຳ ໃຫ້ແຂວງຄຳມ່ວນ, ຫ້ອງການຕ່າງໆຂັ້ນເມືອງ ແລະອົງການຈັດຕັ້ງຕ່າງໆ ດຳເນີນການປະເມີນ ຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການ (DaLNA) ພາຍຫຼັງໄພພິບັດ ໃນກໍລະນີໄພພິບັດກະທົບກັບແຂວງ.

# II. ນິຍາມ

DaLNA ພາຍຫຼັງໄພພິບັດ ແມ່ນການປະເມີນຄວາມຕ້ອງການຫຼັງໄພພິບັດ (PDNA) ໝາຍເຖິງບັນດາກິດຈະກຳທີ່ຈະດຳເນີນໂດຍພະແນກທີ່ກ່ຽວຂ້ອງໃນແຂວງຄຳມ່ວນ ໃນການຄາດຄະເນຄວາມເສຍຫາຍ ແລະ ການສູນເສຍຫຼັງໄພພິບັດ, ເພື່ອຕອບສະໜອງຄວາມຕ້ອງການ ຂອງຂະແໜງ ການຕ່າງໆທີ່ຖືກກະທົບ.  ມີຈຸດປະສົງເພື່ອເຮັດໃຫ້ຂັ້ນແຂວງສາມາດຕອບໂຕ້ກັບຜົນກະທົບຂອງໄພພິບັດ ຕໍ່ຊຸມຊົນ ແລະ ເພື່ອຟື້ນຟູເສດຖະກິດໄວເທົ່າທີ່ເປັນໄປໄດ້. ວິທີວິທະຍາ ແລະກິດຈະກຳ ເພື່ອປະເມີນຄວາມຕ້ອງການຫຼັງໄພພິບັດ (PDNA) ໂດຍພະແນກທີ່ກ່ຽວຂ້ອງ ໄດ້ຖືກບັນຈຸເຂົ້າໃນປຶດແນະນຳ ສຳລັບພະແນກການຕ່າງໆ ໃນຄູ່ມື ຂອງ ຄປຄພບຂ (PDMC).

ປົກກະຕິແລ້ວ DaLNA ແມ່ນການດຳເນີນພາຍຫຼັງໄລຍະສຸກເສີນ, ຊຶ່ງເປັນໄລຍະຮີບດ່ວນພາຍຫຼັງໄພພິບັດເກີດຂຶ້ນແລ້ວ, ຊຶ່ງແມ່ນບັນດາກິດຈະກຳທີ່ເນັ້ນໃສ່ການຄົ້ນຫາແລະກູ້ໄພສຸກເສີນ ແລະ ການດຳເນີນການຊ່ວຍເຫຼືອບັນເທົາທຸກສຸກເສີນ ຄື ການສະໜອງການບໍລິການທີ່ພັກຊົ່ວຄາວ, ອາຫານ, ເຄື່ອງນຸ່ງ ແລະ ຢາປົວພະຍາດ ເພື່ອປ້ອງກັນຜົນກະທົບຈາກໄພພິບັດທີ່ອາດຈະເກີດຂຶ້ນຊໍ້າອີກ. ມັນເປັນໄລຍະທີ່ຊັບພະຍາກອນຂອງລັດ ກຽມພ້ອມແລ້ວເພື່ອປົກປັກຮັກສາຊີວິດ ແລະຊັບສິນ.

ອົງການຈັດຕັ້ງຂັ້ນເມືອງແມ່ນອົງການຈັດຕັ້ງທີ່ຂຶ້ນກັບແຂວງ, ຊຶ່ງປະກອບດ້ວຍອົງການຈັດຕັ້ງຂັ້ນບ້ານ.

ບັນດາຄູ່ຮ່ວມພັດທະນາຕ່າງປະເທດ ແມ່ນບັນດາອົງການຈັດຕັ້ງສາກົນ ທີ່ໃຫ້ການຊ່ວຍເຫຼືອດ້ານການພັດທະນາ ກັບ ສປປລາວ ເຊັ່ນ ທະນາຄານໂລກ, ທະນາຄານພັດທະນາອາຊີ, ແລະ ອົງການຮ່ວມມືສອງຝ່າຍ ຄື ອົງການຮ່ວມມືສາກົນຂອງ ຍີ່ປຸ່ນ, ອົງການອົດສະຕຣາລີ ເພື່ອການພັດທະນາສາກົນ, ແລະ ລວມມີບັນດາອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ.

# III. ກໍານົດເວລາ

DaLNA ແມ່ນການດໍາເນີນການພາຍຫຼັງ ຫຼື ຕອນທ້າຍຂອງໄລຍະສຸກເສີນ. ມັນຈະຖືກດໍາເນີນການອີງຕາມຄໍາສັ່ງຂອງຫ້ອງວ່າການປົກຄອງແຂວງ ບົນພື້ນຖານການຊີ້ນໍາຂອງປະທານ ຄປຄພບ ແຂວງ. ໃນທາງທີ່ດີທີ່ສຸດ, ຕ້ອງສໍາເລັດພາຍໃນ 2 ຫາ 4 ອາທິດ ພາຍຫຼັງໄດ້ຮັບຄໍາສັ່ງ, ແລະອີງຕາມຂະໜາດ ແລະ ຄວາມກວ້າງໃຫຍ່ຂອງຜົນກະທົບຈາກໄພພິບັດ.

# IV. ຂອບເຂດ

DaLNA ຈະກວມເອົາການປະເມີນ ຄວາມເສຍຫາຍ ແລະ ການສູນເສຍ ຂອງຂະແໜງການທີ່ໄດ້ຮັບຜົນກະທົບ, ການວິໄຈຜົນກະທົບຂອງໄພພິບັດຕໍ່ກັບຄົນ ແລະ ເສດຖະກິດ ແລະ ຄວາມສອດຄ່ອງກັບຄວາມຕ້ອງການຟື້ນຟູ ແລະ ກໍ່ສ້າງຄືນໃໝ່. ບົດແນະນໍາສໍາລັບແຂວງຄໍາມ່ວນ ຈະກວມເອົາຫຼາຍຂະແໜງການສໍາຄັນທີ່ຈະນໍາໃຊ້ເຂົ້າໃນບົດລາຍງານ DaLNA.

# V. ການໃຫ້ເງິນທຶນ

ສົມມຸດວ່າ DaLNA ແມ່ນກິດຈະກໍາທີ່ສະໜອງທຶນຈາກລັດ, ຂັ້ນແຂວງສາມາດຂໍທຶນຊ່ວຍເຫຼືອຈາກຂັ້ນສູນກາງ ແລະ ອີງການຄູ່ຮ່ວມພັດທະນາສາກົນ. ເຖິງຢ່າງໃດກໍຕາມ, ເນື່ອງຈາກວ່າອີງການຈັດຕັ້ງຄູ່ຮ່ວມພັດທະນາສາກົນ/ຄູ່ຮ່ວມງານມີຄວາມສໍາຄັນຕໍ່ກັບຜົນຂອງການປະເມີນ DaLNA,ພວກເຂົາເຈົ້າຄວນໄດ້ຖືກຊຸກຍູ້ໃຫ້ປະກອບສ່ວນເຂົ້າໃນຄວາມຕ້ອງການຂອງບັນດາກິດຈະກໍາ ແລະ ຖ້າເປັນໄປໄດ້ຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາເຫຼົ່ານັ້ນຄວນໄດ້ຖືກສະໜັບສະໜູນໃຫ້ເຂົ້າຮ່ວມ.

# VI. ບັນດາກິດຈະກໍາກ່ອນການປະຕິບັດ DaLNA

ເມື່ອເກີດໄພພິບັດ ຂັ້ນແຂວງແລະເມືອງ ເປັນຂັ້ນທໍາອິດທີ່ຕ້ອງປະຕິບັດການຕອບໂຕ້. ຂັ້ນແຂວງ ແລະ ເມືອງຈະໃຫ້ການຊ່ວຍເຫຼືອແບບຮີບດ່ວນ ເຊັ່ນ ການຄົ້ນຫາ ແລະ ກູ້ໄພ, ບໍລິການອາຫານ ແລະ ນໍ້າສະອາດ, ການຍົກຍ້າຍຊົ່ວຄາວ, ບໍລິການສຸຂະພາບ ແລະອື່ນໆ ໃຫ້ກັບປະຊາຊົນໃນເຂດທີ່ໄດ້ຮັບຜົນກະທົບ. ນອກຈາກນີ້, ພວກເຂົາເຈົ້າຈະເລີ່ມຕົ້ນປະເມີນຂະໜາດ ຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການ ຂອງເຂດພື້ນທີ່ ທີ່ໄດ້ຮັບຜົນກະທົບ ແລະ ລາຍງານຕໍ່ ຄປຄພບແຂວງ.

ຄປຄພບແຂວງ ຈະອໍານວຍຄວາມສະດວກ ແລະປະສານງານໃນການສະໜອງການຊ່ວຍເຫຼືອສຸກເສີນເພີ່ມເຕີມໃຫ້ກັບເມືອງ ອີງຕາມການປະເມີນຜົນກະທົບ. ຄປຄພບແຂວງ ຈະລາຍງານໃຫ້

ຫ້ອງວ່າການປົກຄອງແຂວງ ກ່ຽວກັບຜົນກະທົບໂດຍລວມຂອງໄພພິບັດໃນແຕ່ລະເມືອງທີ່ໄດ້ຮັບຜົນກະທົບ ແລະ ພື້ນທີ່ອື່ນໆ ອີງຕາມການບົດລາຍງານທີ່ສັງລວມໄດ້ຈາກສະໜາມ. ບົດລາຍງານ ຄປຄພບແຂວງ ຕໍ່ເຈົ້າແຂວງຈະປະກອບມີຂໍ້ສະເໜີວ່າມີຄວາມຕ້ອງການດຳເນີນການ DaLNA.

# VII. SOP ສຳລັບການດຳເນີນການ DaLNA ໃນແຂວງຄຳມ່ວນ

## A. ອົງການຈັດຕັ້ງທີ່ມີສ່ວນຮ່ວມ

ພະແນກການຕ່າງໆທີ່ຈະເຂົ້າຮ່ວມໃນການດຳເນີນການປະເມີນ ຈະຂຶ້ນຢູ່ກັບລັກສະນະຂອງເຫດການໄພພິບັດ ແລະຂະແໜງການທີ່ໄດ້ຮັບຜົນກະທົບ. ຄຳສັ່ງແນະນຳຂອງຫ້ອງວ່າການປົກຄອງແຂວງ ຈະລະບຸບັນດາພະແນກການທີ່ຈະເຂົ້າຮ່ວມ DaLNA. ແຕ່ລະພະແນກຈະສ້າງຕັ້ງທີມງານ DaLNA, ຊຶ່ງປະກອບມີຫົວໜ້າທີມງານ ແລະ ຄປຄພບແຂວງຈະນຳພາ ແລະ ປະສານງານໃນກິດຈະກຳຂອງພະແນກຕ່າງໆ. ເມື່ອມີຄຳສັ່ງອອກມາ ພະແນກການຕ່າງໆ ແລະ/ຫຼືອົງການຈັດຕັ້ງຕ່າງໆຈະຮັບຜິດຊອບການປະເມີນ ຄວາມເສຍຫາຍ, ການສູນເສຍ ແລະ ຄວາມຕ້ອງການຂອງຂະແໜງການຕົນເອງ ດັ່ງລຸ່ມນີ້:

1. ພະແນກໂຍທາທິການແລະຂົນສົ່ງ;
2. ພະແນກກະສິກຳແລະປ່າໄມ້;
3. ພະແນກສາທາລະນະສຸກ;
4. ພະແນກສຶກສາທິການແລະກິລາ
5. ພະແນກພະລັງງານແລະບໍ່ແຮ່
6. ພະແນກອຸດສະຫະກຳ ແລະ ການຄ້າ
7. ພະແນກຖະແຫຼງຂ່າວ, ວັດທະນະທຳແລະທ່ອງທ່ຽວ
8. ພະແນກອື່ນໆ

ບັນດາທີມງານການປະເມີນຂອງພະແນກການຕ່າງໆ ຈະເຂົ້າຮ່ວມ ໂດຍຄູ່ຮ່ວມງານຂັ້ນເມືອງໃນການປະເມີນ. ຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາສາກົນອາດຈະເຂົ້າຮ່ວມ. ພາຍໃຕ້ການອະນຸມັດຈາກຂັ້ນແຂວງ.

## B. ໄລຍະເວລາຂອງກິດຈະກຳ, ຜົນໄດ້ຮັບ ແລະ ຜູ້ທີ່ຮັບຜິດຊອບ

ພະແນກການ ຫຼື ອົງການຈັດຕັ້ງຕ່າງໆຂ້າງເທິງ ຈະປະຕິບັດຕາມຕາຕະລາງລຸ່ມນີ້ໃນການປະຕິບັດ DaLNA.

| ລ/ດ | ບັນດາກິດຈະກໍາ | ຜົນໄດ້ຮັບ | ບຸກຄົນ ແລະ ອົງການ ຈັດຕັ້ງຮັບຜິດຊອບ | ຈໍານວນວັນ |
|---|---|---|---|---|
| 1 | ຄປຄພບຂ ສະເໜີໄປຍັງຫ້ອງວ່າການ ປົກຄອງແຂວງ ກ່ຽວກັບ ຄວາມຈໍາເປັນ ຂອງການປະເມີນ DaLNA ອີງຕາມ ການປະເມີນເບື້ອງຕົ້ນ ແລະ ບົດລາຍງານ ຈາກເມືອງຕ່າງໆທີ່ໄດ້ຮັບຜົນກະທົບ. | ໜັງສືສະເໜີ | ປະທານ ຄປຄພບຂ | 1 |
| 2 | ບົນພື້ນຖານການສະເໜີຂອງ ຄປຄພບຂ, ຫ້ອງວ່າການປົກຄອງແຂວງອອກຈົດໝາຍ ສັ່ງການ ເຖິງພະແນກການທີ່ກ່ຽວຂ້ອງ ເພື່ອໃຫ້ດໍາເນີນການປະເມີນ ໂດຍພາຍໃຕ້ ການຊີ້ນໍາ ຂອງ ຄປຄພຂ. | ອອກຄໍາສັ່ງເຖິງທຸກໆພະແນກ ແລະ ອົງການຈັດຕັ້ງຕ່າງໆ | ເຈົ້າແຂວງ | 1 |
| 3 | ຄປຄພບຂ ຂຶ້ນແຜນຈັດກອງປະຊຸມ ກັບພະແນກການຕ່າງໆ, ຜູ້ຕາງໜ້າຈາກ ສູນກາງຂອງແຕ່ລະກະຊວງ ແລະ ຄູ່ຮ່ວມ ພັດທະນາສາກົນ ຜູ້ທີ່ຈະເຂົ້າຮ່ວມປະຕິບັດ DaLNA. | ກອງປະຊຸມກັບພະແນກ ແລະອົງການຈັດຕັ້ງຕ່າງໆ | ປະທານ ຄປຄພບຂ | 1 |
| 4 | ຄປຄພບຂ ປະສານງານກັບອົງການຈັດຕັ້ງ ຕ່າງໆ ທີ່ກ່ຽວຂ້ອງ ແລະ ກະກຽມວາລະກອງ ປະຊຸມ. | ວາລະກອງປະຊຸມ ແລະ ບັນຫາ ຕ່າງໆ ທີ່ຕ້ອງປຶກສາຫາລື ໄດ້ກຽມ ພ້ອມ | ປະທານ ຄປຄພບຂ | 1 |
| 5 | ບັນຈຸເອົາການກໍານົດນະໂຍບາຍ ແລະ ຍຸດທະສາດລວມ ສໍາລັບການຟື້ນຟູ ແລະ ກໍ່ສ້າງຄືນໃໝ່ ເຂົ້າໃນວາລະກອງປະຊຸມ.<br><br>ສະເໜີການກຽມຄວາມພ້ອມທີ່ລວມມີ ສະຖານທີ່ ທີ່ຕ້ອງການປະເມີນ, ການເດີນທາງ, ການເງິນ. | ຍຸດທະສາດລວມໄດ້ຖືກກໍານົດ<br><br>ມີຄວາມພ້ອມໃນດ້ານຕ່າງໆ | ປະທານ ຄປຄພບຂ | 1 |
| 6 | ຄປຄພບຂ ເຊີນບັນດາພະແນກການ ແລະ ອົງການຈັດຕັ້ງຕ່າງໆ ພ້ອມດ້ວຍ ຄູ່ຮ່ວມພັດທະນາສາກົນ ມາຮ່ວມ ປະຊຸມ ເພື່ອແຈ້ງກ່ຽວກັບ ການກຽມ ຄວາມພ້ອມສໍາລັບການດໍາເນີນ DaLNA. | ຂໍ້ຕົກລົງເພື່ອຈັດຕັ້ງປະຕິບັດ DaLNA | ປະທານ ຄປຄພບຂ | 1 |
| 7 | ພະແນກການທີ່ກ່ຽວຂ້ອງແລະສະມາຊິກ ອື່ນໆ ຂອງກິດຈະກໍາ DaLNA ຈະເຕົ້າໂຮມ ສະມາຊິກທີມງານການປະເມີນທີ່ໄດ້ຝຶກ ອົບຮົມແລ້ວ ກັບ ຜູ້ທີ່ໄດ້ຖືກສະເໜີໃຫ້ເປັນ ຫົວໜ້າທີມງານການປະເມີນ<br><br>ກະກຽມຂໍ້ມູນພື້ນຖານ ແລະ ຄວາມ ຕ້ອງການອື່ນໆທີ່ຈໍາເປັນ ເຊັ່ນ ການກຽມ ຄວາມພ້ອມດ້ານການເດີນທາງ ແລະອື່ນໆ ອີງໃສ່ໜ້າທີ່ຄວາມຮັບຜິດຊອບ ໃນບົດແນະນໍາ.<br><br>ພະແນກການ/ອົງການຈັດຕັ້ງຕ່າງໆຈະແຈ້ງ ການໄປຫາເມືອງ ເພື່ອມາເຮັດວຽກກັບທີມ ງານການປະເມີນ ແລະ ກະກຽມການປະເມີນ ໃນເຂດທີ່ໄດ້ຮັບຜົນກະທົບ. | ຄໍາສັ່ງເພື່ອສ້າງທີມງານການປະເມີນ ຂອງພະແນກການ ກັບການແຕ່ງຕັ້ງ ຫົວໜ້າທີມ<br><br>ມີຂໍ້ມູນພື້ນຖານ ແລະ ມີຄວາມ ພ້ອມດ້ານອື່ນໆຕາມຄວາມຕ້ອງ ການ<br><br>ຈົດໝາຍຈາກພະແນກການ ເຖິງການນໍາຂັ້ນເມືອງ | ຫົວໜ້າພະແນກ / ອົງການ ຈັດຕັ້ງທີ່ກ່ຽວຂ້ອງ<br><br>ຫົວໜ້າທີມງານ ການປະເມີນ ຂອງພະແນກການທີ່ກ່ຽວຂ້ອງ<br><br>ຫົວໜ້າພະແນກທີ່ກ່ຽວຂ້ອງ | 1 |

| ລ/ດ | ບັນດາກິດຈະກຳ | ຜົນໄດ້ຮັບ | ບຸກຄົນ ແລະ ອົງການ ຈັດຕັ້ງຮັບຜິດຊອບ | ຈຳນວນວັນ |
|---|---|---|---|---|
| 8 | ທີມງານການປະເມີນເດີນທາງໄປສະຖານທີ່ໄດ້ຮັບຜົນກະທົບ | ທີມງານປະເມີນເດີນທາງໄປເຖິງສະຖານທີ່ | ປະທານ ຄປຄພບຂ | 1 |
| | ບັນດາທີມງານປະເມີນຈາກພະແນກຕ່າງໆຈະອະທິບາຍໂດຍຫຍໍ້ໃຫ້ກັບພະນັກງານເມືອງ ແລະ ຄູ່ຮ່ວມງານຂັ້ນເມືອງກ່ຽວກັບການປະເມີນ ເພື່ອເປັນເອກະພາບຕາຕະລາງເວລາລົງເຮັດວຽກ, ສະຖານທີ່ທີ່ຕ້ອງການປະເມີນ ແລະ ປະຊາຊົນຜູ້ທີ່ຕ້ອງໄດ້ໄປປຶກສາຫາລືນຳ ແລະ ອື່ນໆ. | ຄວາມເປັນເອກະພາບກ່ຽວກັບເຂດພື້ນທີ່ທີ່ຕ້ອງດຳເນີນການປະເມີນ ແລະ ການປະຊຸມກັບປະຊາຊົນ | ຫົວໜ້າທີມງານການປະເມີນ ຂອງພະແນກການທີ່ກ່ຽວຂ້ອງ | |
| 9 | ບັນດາທີມງານການປະເມີນຈະ:<br>1. ລົງປະເມີນແລະຄາດຄະເນຄວາມເສຍຫາຍ ບັນດາໂຄງສ້າງທີ່ຖືກກະທົບ.<br>2. ປຶກສາຫາລືກັບຂັ້ນທ້ອງຖິ່ນເພື່ອຄາດຄະເນຄວາມເສຍຫາຍແລະການສູນເສຍ.<br>3. ປຶກສາຫາລືກັບຊາວນາ,ຊາວສວນ, ນັກທຸລະກິດ ແລະ ສະມາຄົມຕ່າງໆທີ່ໄດ້ຮັບຜົນກະທົບ ເພື່ອຢັ້ງຢືນຄວາມຖືກຕ້ອງ ຄວາມເສຍຫາຍ ແລະ ຄວາມຮຸນແຮງຂອງການສູນເສຍ.<br>4. ກະກຽມຕາຕະລາງຄວາມເສຍຫາຍ ແລະ ການສູນເສຍ ຂອງແຕ່ລະການປະເມີນ.<br>5. ຈັດກອງປະຊຸມຮ່ວມກັບພະນັກງານຂັ້ນເມືອງ ເພື່ອສະຫຼຸບຜົນການປະເມີນ ຄວາມເສຍຫາຍ ແລະ ການສູນເສຍໃນເຂດທີ່ໄດ້ຮັບຜົນກະທົບ | ການປະເມີນຄວາມເສຍຫາຍ ແລະ ການສູນເສຍສາມາດເຊື່ອຖືໄດ້ ສໍາລັບແຕ່ລະເມືອງທີ່ໄດ້ຮັບການປະເມີນ | ຫົວໜ້າທີມງານການປະເມີນຂອງຂະແໜງການ/ອົງການທີ່ກ່ຽວຂ້ອງ ປະສານກັບຜູ້ຕາງໜ້າຂອງ ຄປຄພບຂ | 10 |
| 10 | ທີມງານປະເມີນເດີນທາງກັບ | ທີມງານປະເມີນກັບ | ຫົວໜ້າທີມງານປະເມີນຂອງພະແນກ /ອົງການຈັດຕັ້ງທີ່ກ່ຽວຂ້ອງ | 1 |
| 11 | ທີມງານປະເມີນຂອງຂະແໜງການຈັດກອງປະຊຸມຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນກັບສະມາຊິກທີມງານເພື່ອ:<br>1. ກວດກາທົບທວນຂໍ້ມູນທີ່ເກັບກຳມາໄດ້ຈາກສະໜາມ; ແລະ<br>2. ກຳນົດຍຸດທະສາດສຳລັບການຟື້ນຟູ ແລະກໍ່ສ້າງຄືນໃໝ່ | ຂໍ້ມູນທີ່ໄດ້ຈາກສະໜາມຂອງຂະແໜງໄດ້ປະເມີນມີຄວາມໜ້າເຊື່ອຖື ແລະ ຍຸດທະສາດເບື້ອງຕົ້ນສຳລັບຂະແໜງຂົນສົ່ງໄດ້ຖືກກຳນົດຂຶ້ນ | ຫົວໜ້າ ທີມງານ ປະເມີນຂອງພະແນກ/ອົງການຈັດຕັ້ງທີ່ກ່ຽວຂ້ອງ | 10 |
| 12 | ຄປຄພບຂ ຈັດກອງປະຊຸມຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນ ກັບບັນດາທີມງານແຕ່ລະຂະແໜງການ ເພື່ອກວດກາທົບທວນຂໍ້ມູນທີເກັບກຳມາໄດ້ ເພື່ອຫຼີກລ້ຽງການຄິດໄລ່ແບບຊໍ້າຊ້ອນກັນ. | ຂໍ້ມູນທີ່ໄດ້ຈາກສະໜາມຂອງແຕ່ລະຂະແໜງການມີຄວາມໜ້າ ເຊື່ອຖື | ຄປຄພຂ | 3 |
| 13 | ທີມງານການປະເມີນຂອງພະແນກການທີກ່ຽວຂ້ອງກະກຽມບົດລາຍງານ DaLNA ຂອງຂະແໜງການໃຜລາວ ແລະ ສົ່ງໃຫ້ຫົວໜ້າພະແນກ ເພື່ອຮັບຮອງ.<br>ບົດລາຍງານ DaLNA ຄວນຈະປະຕິບັດຕາມບົດແນະນຳຂອງຂະແໜງ | ບົດລາຍງານ DaLNA ໄດ້ຖືກສົ່ງໃຫ້ຫົວໜ້າພະແນກ | ຫົວໜ້າທີມງານການປະເມີນ ຂອງພະແນກ/ອົງການຈັດຕັ້ງ | 2 |

| ລ/ດ | ບັນດາກິດຈະກໍາ | ຜົນໄດ້ຮັບ | ບຸກຄົນ ແລະ ອົງການ ຈັດຕັ້ງຮັບຜິດຊອບ | ຈໍານວນວັນ |
|---|---|---|---|---|
| 14 | ຫົວໜ້າພະແນກທົບທວນບົດລາຍງານ DaLNA | ບົດລາຍງານ DaLNA ໄດ້ຖືກຮັບຮອງ ແລະ ສົ່ງໃຫ້ກັບ ຄປຄພບຂ | ຫົວໜ້າພະແນກ/ອົງການຈັດຕັ້ງທີ່ກ່ຽວຂ້ອງ | 2 |
| 15 | ພະແນກສົ່ງບົດລາຍງານໃຫ້ ຄປຄພບຂ | ບົດລາຍງານ DaLNA ຂອງແຕ່ລະຂະແໜງການ ໄດ້ຖືກສົ່ງໃຫ້ ຄປຄພບຂ | ຫົວໜ້າພະແນກ / ອົງການຈັດຕັ້ງທີ່ກ່ຽວຂ້ອງ | 2 |
| 16 | 1. ຄປຄພບຂ ຈະສັງລວມ ແລະ ວິເຄາະ ບົດລາຍງານ DaLNA ຂອງພະແນກຕ່າງໆ.<br>2. ຄປຄພບຂ ກະກຽມຮ່າງບົດລາຍງານ DaLNA ທີ່ໄດ້ສັງລວມຄວາມເສຍຫາຍ, ການສູນເສຍແລະ ຄວາມຕ້ອງການຂອງຂະແໜງການຕ່າງໆ: ຜົນກະທົບດ້ານເສດຖະກິດ - ສັງຄົມ, ສະເໜີຍຸດທະສາດການຟື້ນຟູ ແລະ ສົ່ງລາຍງານໃຫ້ກັບຫ້ອງວ່າການປົກຄອງແຂວງ ເພື່ອອະນຸມັດ. | ບົດລາຍງານ DaLNA ສະບັບສົມບູນໄດ້ຖືກສົ່ງໃຫ້ຫ້ອງວ່າການປົກຄອງແຂວງ | ປະທານ ຄປຄພຂ | 5 |
| 17 | ຄປຄພບຂ ຈັດກອງປະຊຸມປຶກສາຫາລືກັບ ພະແນກການຕ່າງໆ, ກະຊວງຕ່າງໆ ແລະ ບັນດາຄູ່ຮ່ວມພັດທະນາ ເພື່ອນໍາສະເໜີບົດລາຍງານ DaLNA ທີ່ໄດ້ຮັບອະນຸມັດຈາກເຈົ້າແຂວງ. | ຮ່າງບົດລາຍງານໄດ້ຢັ້ງຢືນຄວາມຖືກຕ້ອງໂດຍພະແນກຕ່າງໆ ແລະ ໄດ້ອະນຸມັດໂດຍເຈົ້າແຂວງ | ປະທານ ຄປຄພຂ | 1 |
| 18 | ບົນພື້ນຖານການປຶກສາຫາລື, ຄປຄພບຂ ຈະສໍາເລັດບົດລາຍງານ DaLNA ແລະ ສົ່ງ ໃຫ້ຫ້ອງວ່າການປົກຄອງແຂວງ ສໍາລັບທົບທວນ ແລະ ອະນຸມັດຮັບຮອງ | ບົດລາຍງານ DaLNA ສະບັບສົມບູນຖືກສົ່ງໃຫ້ເຈົ້າແຂວງເພື່ອອະນຸມັດ | ປະທານ ຄປຄພຂ | 5 |
| 19 | ຫ້ອງວ່າການປົກຄອງແຂວງຈະແຈກຢາຍບົດລາຍງານ DaLNA ທີ່ໄດ້ຮັບຮອງແລ້ວ ໃຫ້ກັບທຸກໆ ພະແນກການ/ອົງການຈັດຕັ້ງ, ກະຊວງແຜນການແລະການລົງທຶນ ແລະ ກະຊວງທີ່ກ່ຽວຂ້ອງອື່ນໆ ແລະ ຄູ່ຮ່ວມພັດທະນາ. | ບົດລາຍງານ DaLNA ທີ່ໄດ້ເຊັນອະນຸມັດຮັບຮອງແລ້ວ ໄດ້ຖືກແຈກຢາຍ | ຫ້ອງວ່າການປົກຄອງແຂວງ | 2 |
| | ລວມ | | | 51ວັນ |

ບາດກ້າວຕ່າງໆຂ້າງເທິງຈະນໍາໄປສູ່ການພັດທະນາ DaLNA ທີ່ໜ້າເຊື່ອຖືໄດ້ ທີ່ຈະເປັນພື້ນຖານຂອງການວາງແຜນ, ຄິດໄລ່ງົບປະມານ, ການເງິນ ແລະ ການຈັດຕັ້ງປະຕິບັດ. (ອີງໃສ່ ຄູ່ມືແນະນໍາການສ້າງແຜນການຟື້ນຟູແລະກໍ່ສ້າງຄືນໃໝ່ຫຼັງໄພພິບັດ).

# VIII. ບົດແນະນຳໂດຍທົ່ວໄປ ກ່ຽວກັບ SOP

## ການປ່ຽນແປງ

A. ສິ່ງທີ່ຕ້ອງເອົາໃຈໃສ່ ຄື ໄພພິບັດຕ່າງໆອາດກໍ່ໃຫ້ເກີດຜົນກະທົບທີ່ແຕກຕ່າງກັນໃນພື້ນທີ່ຕ່າງກັນ ແລະ/ຫຼື ຂະແໜງການຕ່າງໆ, ທີມງານປະເມີນທີ່ສະໜາມຄວນກຳນົດເວລາທີ່ເໝາະສົມ ແລະ ໄລຍະເວລາທີ່ຕ້ອງການສຳເລັດ DaLNA.

B. ພະແນກການ ຫຼື ອົງການຈັດຕັ້ງທີ່ຮັບຜິດຊອບສຳລັບຈັດຕັ້ງປະຕິບັດ DaLNA ໃນຂະແໜງການສະເພາະອາດປະກອບມີຜູ້ຕາງໜ້າຈາກຫ້ອງການຕ່າງໆ, ຄູ່ຮ່ວມພັດທະນາ ແລະ ໜ່ວຍງານເອກະຊົນທີ່ກ່ຽວຂ້ອງ ກໍສົມຄວນໄດ້ເຂົ້າຮ່ວມໂດຍຫົວໜ້າພະແນກ/ອົງການຈັດຕັ້ງ.